## ແຜນການສອນ
## ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 15 ສິງຫາ 2010 (08-15-2010)

---

**<u>ສະແດງຄວາມເມດຕາ:</u>**

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** (2 ຊາມູເອນ 9:1-13)

### <u>ບົດຮຽນນີ້ເວົ້າກ່ຽວກັບຫຍັງ?:</u>

ພຣະເຈົ້າມີພຣະປະສົງ ໃຫ້ປະຊາກອນຂອງພຣະອົງ ຊອກຫາໂອກາດ ເພື່ອສະແດງຄວາມເມດຕາຕໍ່ຄົນອື່ນ ແລະ ໃຊ້ໂອກາດນັ້ນຮັບໃຊ້.

### <u>ເປັນຫຍັງບົດຮຽນນີ້ຈຶ່ງມີຄວາມສຳຄັນ?:</u>

ຄວາມເມດຕາແມ່ນລັກສນະຂອງພຣະເຈົ້າ ແຕ່ເຫັນວ່າຫລາຍຄົນໃນສມັຍນີ້ບໍ່ມີທ່າທາງສຸພາບແລະເມດຕາ ພວກເຂົາອາຈເປັນຄົນເຫັນແກ່ຕົວ ບໍ່ຄຳນຶງເຖິງຄົນອື່ນ ພວກເຂົາຄິດວ່າຄົນອື່ນບໍ່ດີ ແລະຕ້ອງການຕອບສນອງດ້ວຍການເຮັດບໍ່ດີແທນ ແມ່ນແຕ່ຄອບຄົວຄົນທີ່ເຂົາຮັກເຮົາ. ຫລາຍເທື່ອ ພວກເຮົາຢາກໃຫ້ຄົນທີ່ເຮັດບໍ່ດີໄດ້ຮັບໂທດ ຈາກການກະທຳຂອງເຂົາ ແລະມີຈິດໃຈຢາກທຳລາຍເຂົາ. ຄວາມຄິດຢ່າງນັ້ນ ແມ່ນຄວາມຄິດກົງກັນຂ້າມກັບຄຳສອນໃນພຣະຄັມພີ ທີ່ສອນພວກເຮົາວ່າໃຫ້ສະແດງຄວາມເມດຕາຕໍ່ທຸກໆ ຄົນ.

### <u>ບົດຮຽນນີ້ສາມາດມີຜົນສະທ້ອນຕໍ່ຊີວິດຂອງທ່ານຢ່າງໃດ?:</u>

ບົດຮຽນນີ້ຈະຊ່ອຍໜູນໃຈທ່ານໃຫ້ສະແດງເຖິງ ຄວາມສຸພາບອ່ອນຫວານຂອງພຣະເຈົ້າ.

### <u>ການຈັດຕຽມ ແລະແຜນການສອນຂອງຄຣູ:</u>

1. ອະທິຖານຂໍການຊົງນຳຈາກພຣະວິນຍານບໍຣິສຸດ ກ່ອນສິ່ງອື່ນໝົດ.
2. ສຶກສາຂໍ້ພຣະຄັມພີທີ່ຈະໃຊ້ໃນບົດຮຽນນີ້.
3. ຖາມລື້ມຄວາມຊົງຈຳຂອງນັກຮຽນໃນບົດຮຽນອາທິດແລ້ວນີ້.
4. ອ່ານ ແຜນການສອນ ໝາຍບ່ອນສຳຄັນ, ປັບປຸງ, ແກ້ໄຂ, ຈົດບັນທຶກ ແລະ ອື່ນໆ........
5. ແຈກຢາຍບົດຮຽນໃຫ້ນັກຮຽນທຸກຄົນ

### <u>ແນະນຳ:</u>

- ໃນເມື່ອທ່ານຄິດເຖິງຄວາມເມດຕາ ແລ້ວແມ່ນຜູ້ໃດທີ່ມີຄວາມເມດຕາຕໍ່ທ່ານ ທີ່ທ່ານນຶກອອກ? ແລ້ວ ຄົນຜູ້ນັ້ນໄດ້ກະທຳ ຫລືມີລັກສນະທ່າທີ ທີ່ສະແດງອອກມາໃຫ້ເຫັນເຖິງຄວາມເມດຕາຕໍ່ທ່ານ? ຄວາມເມດຕາອັນນັ້ນໄດ້ມີຜົນສະທ້ອນຕໍ່ຊີວິດຂອງທ່ານແນວໃດ?
- ຄວາມເມດຕາບໍ່ໄດ້ມີຢູ່ກັບຄົນສເມີໄປ; ຄົນໃນວັທນະທັມຂອງພວກເຮົາຫລາຍເທື່ອກໍບໍ່ມີຄວາມເມດຕາ.
- ແມ່ນຫຍັງທີ່ເປັນເຫດຜົນບາງຢ່າງທີ່ເຮັດໃຫ້ສັງຄົມວັທນະທັມຂອງພວກເຮົາບໍ່ມີຄວາມເມດຕາ?

- (ຄຳຕອບອາຈເປັນເພາະ ຄວາມເຫັນແກ່ຕົວ, ຄວາມເຈັບປວດລວດລ້າວຢ່າງແສນສາຫັດທີ່ຜ່ານມາ,ດ້ວຍການເມີນເສີຍ ບໍ່ນັບຖືພຣະເຈົ້າ ແລະ ອື່ນໆ....)

1. **<u>ຄວາມຕັ້ງໃຈສະແດງເຖິງຄວາມສຸພາບ:</u>** (2 ຊາມູເອນ 9:1-3)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານພຣະທັມ 2 ຊາມູເອນ 9:1-3
- ໃຫ້ນຶກເຖິງ ຄຳໝັ້ນສັນຍາ ໃນການເປັນເພື່ອນທີ່ດີຕໍ່ກັນຂອງດາວິດ ແລະໂຢນາທານ ທາງດ້ານການຊ່ອຍເຫລືອສນັບສນຸນ ແລະສັດຊື່ຕໍ່ກັນແລະກັນ ຊຶ່ງເປັນເພື່ອນກັນຢ່າງຍາວນານ ຕລອດຊີວິດ ທີ່ໄດ້ສະແດງອອກມາໃຫ້ພວກເຮົາເຫັນຫລາຍໆ ທາງແຕກຕ່າງກັນໄປ, ເຂົາເຈົ້າໄດ້ສະແດງໄດ້ສະແດງຄວາມເມດຕາໃຫ້ພວກເຮົາເຫັນ.
- ຂໍໃຫ້ນັກຮຽນຜູ້ນຶ່ງອ່ານ 2 ຊາມູເອນ 9:1-3 ແລ້ວເອົາຄຳວ່າ ຄວາມເຊື່ອໄວ້ວາງໃຈ ມາແທນຄຳວ່າເມດຕາ. ໃນເມື່ອປ່ຽນເອົາຄຳສອງຄຳນີ້ມາແທນທີ່ກັນແລ້ວ ທ່ານມີຄວາມເຂົ້າໃຈແນວໃດ?
- ໃຫ້ນັກຮຽນຜູ້ນຶ່ງອ່ານ 2 ຊາມູເອນ 4:4, ແລ້ວອະທິບາຍວ່າ ເປັນດ້ວຍເຫດໃດ ເມຟີໂບເຊັດຈຶ່ງຍ່າງບໍ່ໄດ້.
- ເປັນຫຍັງຈຶ່ງມີທາຍາດຂອງຊາອູນຢູ່ພຽງຜູ້ດຽວ?
- ໃຫ້ອະທິບາຍເຖິງ ການຊອກຫາທາຍາດຂອງຊາອູນຂອງດາວິດ ເພື່ອຢາກຮູ້ວ່າຍັງມີໃຜເຫລືອຢູ່ບໍ່ນັ້ນເພາະດ້ວຍເຫດໃດ?
- ຫລັງຈາກດາວິດໄດ້ອອກໄປທຳການຕໍ່ສູ້ອິບຣິມວັທນະທັມໄດ້ມາຕຖານແລ້ວ, ແມ່ນຫຍັງທີ່ເປັນຜົນສະທ້ອນທີ່ໃຫ້ດາວິດມີຄວາມເມດຕາຕໍ່ ເມຟີໂບເຊັດ? ການສະແດງຄວາມເມດຕາ ແມ່ນການຈັດຫາໃຫ້ລ່ວງໜ້າເພື່ອເປັນການຝຶກຝົນ. ພວກເຮົາອາດບໍ່ໄດ້ມີຄວາມເມດຕາທີ່ສະແດງອອກມາສູ່ຄົນອື່ນໂດຍໂອໂຕມາຕິກ ແຕ່ພວກເຮົາຕ້ອງຕັດສິນໃຈສະແດງອອກມາ ໂດຍທີ່ເວລາທີ່ພວກເຮົາຕິດທຸຣະ, ເວລາມີຈິດໃຈວ້າວຸ່ນ, ຫລືເວລາອິດເມື່ອຍດ້ວຍ.

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** (2 ຊາມູເອນ 9:1-3)

1. ມີເຫດຜົນອັນໃດ ທີ່ດາວິດໄດ້ສະແດງໃຫ້ຕໍ່ຄອບຄົວຂອງຊາອູນຄອບຄົວທີ່ບໍ່ມີຄວາມເມດຕາໄດ້ເຫັນ?
2. ດາວິດໄດ້ເປັນເພື່ອນແບບໃດກັບໂຢນາທານ ແລະຫາທາງເອົາຊະນະດ້ວຍເຫດຜົນແນວໃດ?
3. ແມ່ນໃຜແດ່ທີ່ທ່ານມີຄວາມຮູ້ສຶກຢາກໃຫ້ເຂົາພິສຸດໄດ້ວ່າຜູ້ໃດຜູ້ນຶ່ງຊຶ່ງເປັນຄົນທີ່ບໍ່ມີຄວາມເມດຕາ? ທ່ານໄດ້ໃຫ້ກຽດແກ່ ຄວາມເຊື່ອຂອງຄົນອື່ນໂດຍການສະແດງຄວາມເມດຕາຕໍ່ຄອບຄົວຂອງເຂົາ?

2. **<u>ຊອກຫາໂອກາດເພື່ອສະແດງຄວາມເມດຕາ:</u>** (2 ຊາມູເອນ 9:4-6)

- ສເນີໃຫ້ນັກຮຽນຜູ້ນຶ່ງອ່ານພຣະທັມ 2 ຊາມູເອນ 9:4-6
- ພວກເຮົາອາດຄິດ ຫລືນຶກເຖິງເຣື່ອງຫົນທາງທີ່ຈະສະແດງຄວາມເມດຕາຕໍ່ຄົນອື່ນເລື້ອຍໆ, ແຕ່ພວກເຮົາບໍ່ໄດ້ທຳຕາມທີ່ໄດ້ຄິດມາ.
- ການສະແດງຄວາມເມດຕາຕໍ່ຄອບຄົວຂອງຊາອູນເປັນການງ່າຍບໍ່? ຊ່ອຍນັກຮຽນໃຫ້ເຫັນການກະທຳຫລາຍໆ ທີ່ດາວິດໄດ້ກະທຳໃນໃນດ້ານຄວາມເມດຕາເຊັ່ນ: ( ການຖາມຫາທາຍາດຂອງຊາອູນ ນຳຊີບາ, ບ່ອນຢູ່ຂອງເມຟີໂບເຊັດ, ນຳເມຟີໂລເຊັດມາຈາກເຢຣູຊາເລັມ, ແລະອື່ນໆ...)

- ພວກເຮົາບາງເທື່ອກໍຢາກຈະສະແດງຄວາມເມດຕາ ແຕ່ກໍບໍ່ໄດ້ສະແດງອອກມາ.
- ມີໂອກາດຈັກຄັ້ງແລ້ວທີ່ພວກເຮົາໄດ້ມີໂອກາດທີ່ສະແດງຄວາມເມດຕາຕໍ່ຄົນທີ່ຕົກຢູ່ໃນຄວາມທຸກທໍຣະມານ, ຄົນທີ່ຕ້ອງການຄວາມຊ່ວຍເຫລືອ?

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u> 2 ຊາມູເອນ 9:4-6

1. ທ່ານຄິດວ່າເມຟີໂບເຊັດມີຄວາມໂຄຣົບນັບຖື ຄວາມເມດຕາ ຫລືການອັສຈັນຈາກດາວິດບໍ່?
2. ໃນຊີວິດຂອງທ່ານ ມີໃຜແດ່ບໍ່ທີ່ບໍ່ໃຫ້ຄວາມນັບຖືຍ້ອນຄວາມເມດຕາທີ່ທ່ານມີຕໍ່ເຂົາ? ຜົນສະທ້ອນກັບມານັ້ນມີຫຍັງແດ່ ຖ້າທ່ານໄດ້ສະແດງຄວາມເມດຕາຕໍ່ເຂົາ?
3. ມັນເປັນການຊັກຊ້າສຳລັບພວກເຮົາແລ້ວບໍ່ທີ່ຈະສະແດງຄວາມເມດຕາແກ່ບາງຄົນ?
4. ໃນປີທີ່ຜ່ານມາມີໃຜແດ່ທີ່ທ່ານໄດ້ສະແດງຄວາມເມດຕາຕໍ່? ທ່ານຈະສະແດງຄວາມເມດຕາຕໍ່ເຂົາເຈົ້າແນວໃດໃນທຸກວັນນີ້?

3 . <u>ປະຕິບັດຄວາມເມດຕາ:</u> (2 ຊາມູເອນ 9:7-13)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ 2 ຊາມູເອນ 9:7-13
- ຂອງຂວັນທີ່ດາວິດໃຫ້ແກ່ ເມຟີໂບເຊັດນັ້ນມີຫຍັງແດ່?
- ດາວິດໄດ້ມີຄວາມຄາດຫວັງແນວໃດຕໍ່ການກັບມາຂອງເມຟີໂບເຊັດ? ພວກເຮົາມີຄວາມແນ່ໃຈໄດ້ແນວໃດວ່າ ຄວາມເມດຕາຂອງພວກເຮົາໄດ້ສະທ້ອນໃຫ້ເຫັນຄວາມເມດຕາຂອງພຣະເຈົ້າ?
- ຂໍໃຫ້ນັກຮຽນຂຽນ ຫລືເວົ້າວ່າ "ຂ້າພະເຈົ້າຈະສະແດງຄວາມເມດຕາໃຫ້ໄດ້"

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u> 2 ຊາມູເອນ 9:7-13

1. ເມຟີໂບເຊັດໄດ້ເຮັດຫຍັງໃຫ້ເໝາະສົມກັບຄວາມເມດຕາຂອງດາວິດ
2. ທ່ານໄດ້ເຮັດຫຍັງແດ່ແລ້ວເພື່ອໃຫ້ເໝາະສົມກັບຄວາມເມດຕາຂອງພຣະເຈົ້າ?
3. ແມ່ນຫຍັງທີ່ຄົນອື່ນໆ ຕ້ອງເຮັດຕາມຄວາມເມດຕາຂອງພວກເຮົາ? ແມ່ນຫຍັງທີ່ຊີບາ ແລະຄອບຄົວຂອງລາວໄດ້ສະແດງຕໍ່ການອວຍພອນຂອງເມຟີໂບເຊັດ?
4. ກຸ່ມໃດ, ອົງການໃດ, ຫລືສິ່ງໃດເຮັດໃຫ້ທ່ານໄດ້ຮ່ວມສະແດງຄວາມເມດຕາຕໍ່ຄົນອື່ນໄດ້?

<u>ພຣະຄັມພີແຫ່ງຄວາມຈິງ</u>

- ຄວາມເມດຕາເປັນທາງເລືອກ, ພວກເຮົາສະແດງຄວາມເມດຕາ ເພາະພຣະເຈົ້າໄດ້ຊົງເມດຕາຕໍ່ພວກເຮົາ.
- ຄົນອື່ນຈະບໍ່ໄດ້ຄວາມເມດຕາກ່ອນທີ່ພວກເຮົາສະແດງຄວາມເມດຕາໃຫ້ເຂົາເຈົ້າ.
- ໃນເມື່ອພວກເຮົາສັນຍາຕໍ່ຄົນ ຫລືຕໍ່ພຣະເຈົ້າ. ພວກເຮົາຕ້ອງຮັກສາຄຳສັນຍານັ້ນ.
- ບາງເທື່ອພວກເຮົາຕ້ອງຊອກສແວງຫາໂອກາດສະແດງຄວາມເມດຕາ ເພາະວ່າເຂົາເຈົ້າຈະບໍ່ໄດ້ເຫັນແຈ້ງໃນພວກເຮົາ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org by JH**